**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເມືອງສະໜ້ອຍ.

ຫ້ອງການ ໂຍທາທິການ ແລະ ຂົນສົ່ງເມືອງ.

ເລກທີ: 60...../ຍທຂ.ສໜ.

ລົງວັນທີ:......**27/03/2026**.......

## <u>ໜັງສືແຈ້ງການ</u>

## <u>ເຊີນເຂົ້າຮ່ວມປະມູນ (ຈັດຊື້-ຈັດຈ້າງ).</u>

**<u>ເຖິງ</u>:** ບໍລິສັດ ຮັບເໝົາກໍ່ສ້າງ ແລະ ສ້ອມແປງຂົວທາງ ຕ່າງໆ ທີ່ຢູ່ພາຍໃນ ແລະ ຕ່າງແຂວງ ທີ່ນັບຖື.

**<u>ເລື່ອງ</u>:** ປະກາດແຈ້ງການເຊີນເຂົ້າຮ່ວມການປະມູນ (ຈັດຊື້-ຈັດຈ້າງ) ໂຄງການ ກໍ່ສ້າງຟື້ນຟູເສັ້ນທາງແຕ່ແຍກທາງ 15 ຫາ ບ້ານອົງກົງ, ທາງຮ່ອມເຂົ້າບ້ານ 02 ເສັ້ນ, ລວມລວງຍາວ 1.5 Km, ລວງກ້ວາງ 5.00 m, ກໍ່ສ້າງຂົວແຜນຂ້າມຫ້ວຍ ລວງຍາວ 20 m, ເມືອງສະໜ້ອຍ.

- ອີງຕາມ ກົດໝາຍ, ເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ວ່າດ້ວຍ ການປະມູນຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ.
- ອີງຕາມ ກົດໝາຍ, ເລກທີ 72 /ສພຊ, ລົງວັນທີ 15 ທັນວາ 2015 ວ່າດ້ວຍ ການລົງທຶນຂອງລັດ (ສະບັບປັບປຸງ).
- ອີງຕາມ ຂໍ້ຕົກລົງຂອງເຈົ້າເມືອງງສະໜ້ອຍ ສະບັບເລກທີ: 134/ຈມ.ສໜ, ລົງວັນທີ: 13/06/2023 ວ່າດ້ວຍ ການຈັດຕັ້ງ ແລະ ເຄື່ອນໄຫວວຽກງານ ຂອງຫ້ອງການ ໂຍທາທິການ ແລະ ຂົນສົ່ງເມືອງສະໜ້ອຍ.
- ອີງຕາມ ຂໍ້ຕົກລົງຂອງປະທານ ຄະນະກຳມະການປົກຄອງເມືອງ, ສະບັບເລກທີ: 77/ຄປມ.ສໜ, ລົງວັນທີ: 26/03/2026 ວ່າດ້ວຍ ມອບສິດໃຫ້ຫ້ອງການ ໂຍທາທິການ ແລະ ຂົນສົ່ງເມືອງສະໜ້ອຍ ເປັນເຈົ້າຂອງໂຄງການ ກໍ່ສ້າງຟື້ນຟູເສັ້ນທາງແຕ່ແຍກທາງ 15 ຫາ ບ້ານອົງກົງ, ທາງຮ່ອມເຂົ້າບ້ານ 02 ເສັ້ນ, ລວມລວງຍາວ 1.5 Km, ລວງກ້ວາງ 5.00 m, ກໍ່ສ້າງຂົວແຜນຂ້າມຫ້ວຍ ລວງຍາວ 20 m, ພ້ອມທັງເປີດການປະມູນເອົາບໍລິສັດມາຮັບເໝົາ ໂຄງການດັ່ງກ່າວ.

**ຫ້ອງການ ໂຍທາທິການ ແລະ ຂົນສົ່ງເມືອງສະໜ້ອຍ** ຂໍຖືເປັນກຽດແຈ້ງການມາໃຫ້ທ່ານຊາບວ່າ: ບໍລິສັດໃດມີຄວາມສົນໃຈ ຕ້ອງການເຂົ້າຮ່ວມການປະມູນ ໂຄງການ ສ້ອມແປງທາງຄົນຍ່າງ, ຕາບຊຸມຮັ້ງໄກ່ໃນຕົວເມືອງ, ແຕ່ສາມແຍກທາງ 15 ຫາ ສີ່ແຍກທາງດິນແດງໄປບ້ານອາຊີງ ລວງຍາວ ຂ້າງຊ້າຍ, ຂວາ 1,732 m, ເພື່ອຮັບເໝົາກໍ່ສ້າງ ເຊິ່ງຜູ້ສົນໃຈຕ້ອງມີໃບດຳເນີນທຸລະກິດດ້ານການກໍ່ສ້າງຂົວທາງຄົບຖ້ວນຕາມລະບຽບກົດໝາຍ, ສ່ວນການສຳລະສະສາງ ແມ່ນຕາມສົກງົບປະມານທີ່ມີໃນແຕ່ລະປີ, ການເຂົ້າຮ່ວມການປະມູນມີລາຍລະອຽດດັ່ງລຸ່ມນີ້.

1. ໂຄງການ ກໍ່ສ້າງຟື້ນຟູເສັ້ນທາງແຕ່ແຍກທາງ 15 ຫາ ບ້ານອົງກົງ, ທາງຮ່ອມເຂົ້າບ້ານ 02 ເສັ້ນ, ລວມລວງຍາວ 1.5 Km, ລວງກ້ວາງ 5.00 m, ກໍ່ສ້າງຂົວແຜນຂ້າມຫ້ວຍ ລວງຍາວ 20 m, ເມືອງສະໜ້ອຍ, ເວລາການກໍ່ສ້າງ ແມ່ນ 24 ເດືອນ, ເລີ່ມລົງມືກໍ່ສ້າງນັບແຕ່ວັນ ເຊັນສັນຍາ ເປັນຕົ້ນໄປ.
2. ເອກະສານປະມູນສາມາດສະເໜີຊື້ ທີ່ຫ້ອງການ ໂຍທາທິການ ແລະ ຂົນສົ່ງເມືອງສະໜ້ອຍ ໃນເວລາ ທາງລັດຖະການ, ມີລາຄາຊຸດລະ: 2.000.000ກີບ (ສອງລ້ານກີບ), ການປະມູນໃຊ້ເວລາ: 1 ວັນ.
3. ການປະມູນຈະໄດ້ຈັດຂຶ້ນ, ໃນວັນທີ: 01/05/2026 ທີ່ຫ້ອງການ ໂຍທາທິການ ແລະ ຂົນສົ່ງເມືອງສະໜ້ອຍ.

<u>**ໝາຍເຫດ:**</u> ເອກະສານປະກອບໃນການປະມູນມີດັ່ງນີ້.

1. ໃບສະເໜີຂໍອະນຸຍາດຈັດຕັ້ງປະຕິບັດໂຄງການ (ໃບເຈດຈຳນົງ) ແບບຟອມຍື່ນປະມູນ ຈຳນວນ 01 ໃບ;
2. ໃບຄິດໄລ່ລາຄາແຜນຜັງການກໍ່ສ້າງຄົບຊຸດ ຈຳນວນ 01 ຊຸດ;
3. ໃບທະບຽນວິສາຫະກິດ (ຈາກ ພະແນກ ການຄ້າແຂວງ) ຈຳນວນ 01 ໃບ;
4. ໃບໄລ່ລຽງອາກອນປີໃຫ້ຖືກຕ້ອງຕາມລະບຽບກົດໝາຍ ຈຳນວນ 01 ໃບ;
5. ໃບຢັ້ງຢືນ ຜົນງານຜ່ານມາ ຈຳນວນ 01 ໃບ;
6. ໃບປະກາດສະນີຍະບັດຂອງພະນັກງານວິຊາການ ຂົວທາງ ຂອງບໍລິສັດ ຈຳນວນ 03 ສທ;
7. ຕາຕະລາງແຜນປະຕິບັດວຽກ ແລະ ກຳນົດເວລາການກໍ່ສ້າງ ຈຳນວນ 01 ຊຸດ;
8. ໃບຢັ້ງຢືນ ຖານະການເງິນຈາກທະນະຄານ ຂອງບໍລິສັດ ອາຍຸບໍ່ເກີນ 3 ເດືອນ ຈຳນວນ 01 ໃບ;
9. ເອກະສານຄ້ຳປະກັນຊອງປະມູນ 2% ຈຳນວນ 01 ໃບ;
10. ໃບອະນຸຍາດ ຂໍ້ສືບຕໍ່ ດຳເນີນທຸລະກິດຈາກຂະແໜງ ຍທຂ ຈຳນວນ 01 ໃບ;
11. ຕ້ອງມີໃບມອບສິດດຳເນີນທຸລະກິດຈາກບໍລິສັດແມ່ (ຖ້າໄດ້ຮັບຈາກຜູ້ອື່ນ) ຈຳນວນ 01 ໃບ;
12. ໃບຊີວະປະຫວັດຫຍໍ້ຂອງຜູ້ອຳນວຍການບໍລິສັດ ຫຼື ຜູ້ຕາງໜ້າທີ່ໄດ້ຮັບໃບມອບສິດ ຈຳນວນ 01 ຊຸດ;
13. ໃບຢັ້ງຢືນທີ່ຢູ່ຂອງຜູ້ອຳນວຍການບໍລິສັດ ຫຼື ຜູ້ຕາງໜ້າທີ່ໄດ້ຮັບໃບມອບສິດ ຈຳນວນ 01 ຊຸດ;
14. ເອກະສານອື່ນໆທີ່ກ່ຽວຂ້ອງ.

ດັ່ງນັ້ນ, ຈຶ່ງແຈ້ງການ ມາຍັງບັນດາບໍລິສັດ ຜູ້ທີ່ມີຄວາມສົນໃຈເຂົ້າຮ່ວມການປະມູນໂຄງການດັ່ງກ່າວໃນຄັ້ງນີ້ ຕາມເນື້ອໃນ ແລະ ເງື່ອນໄຂຂ້າງເທິງນີ້ດ້ວຍ./.

ທີ່ ສະໝ້ວຍ, ວັນທີ: **27/03/2026**

**ຫົວໜ້າຫ້ອງການໂຍທາທິການ ແລະ ຂົນສົ່ງ**